# ແຜນການຂອງປະເທດລາວ

## 1. ການນຳໃຊ້

**1.1** ເອກະສານສະບັບນີ້ປະກອບເປັນແຜນການຂອງປະເທດຕາມທີ່ໄດ້ກ່າວເຖິງໃນເງື່ອນໄຂການທະນາຄານທົ່ວໄປຂອງ ANZ ແລະ ກຳນົດເງື່ອນໄຂພິເສດຂອງປະເທດທີ່ທະນາຄານຈະມອບໃຫ້ລູກຄ້າທີ່ມີ ໜຶ່ງ ຫຼື ຫຼາຍ ບັນຊີ ຫຼື ການບໍລິການໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("**ສປປ ລາວ**").

**1.2** ຕາຕະລາງແຜນການຂອງປະເທດລາວສະບັບນີ້ເປັນສ່ວນເພີ່ມເຕີ່ມໃຫ້ກັບເງື່ອນໄຂການທະນາຄານທົ່ວໄປຂອງ ANZ. ຄຳສັບທີ່ພິມເປັນໂຕໃຫຍ່ທີ່ຖືກນຳໃຊ້ໃນຕາຕະລາງແຜນການຂອງປະເທດລາວສະບັບນີ້ແມ່ນມີຄຳນິຍາມສະເພາະໃນຕາຕະລາງຄຳນິຍາມທີ່ເປັນສ່ວນເພີ່ມເຕີ່ມໃຫ້ກັບເງື່ອນໄຂການທະນາຄານທົ່ວໄປຂອງ ANZ.

## 2. ເງື່ອນໄຂການທະນາຄານທົ່ວໄປຂອງ ANZ

**2.1** **ການແປງສະກຸນເງິນ ແລະ ການໂອນເງິນ**. ທະນາຄານຈະບໍ່ມີພັນທະໃນການການແປງສະກຸນເງິນ ແລະ ການໂອນເງິນທີ່ຕິດພັນກັບການດຳເນີນງານຂອງບັນຊີ ຫຼື ບົດບັນຍັດຂອງການບໍລິການ (ລວມທັງ, ໂດຍບໍ່ມີເງື່ອນໄຂ, ການຊຳລະສະສາງລະຫວ່າງປະເທດ ແລະ ບົດບັນຍັດກ່ຽວພັນກັບການບໍລິການສະພາບຄ່ອງ) ຖ້າຫາກວ່າບໍ່ມີການກຳນົດໃນກົດໝາຍທີ່ກ່ຽວຂ້ອງ, ທະນາຄານຕ້ອງບໍ່ມີການລຳອຽງ ຕໍ່ສິດອື່ນໆທີ່ລະບຸໃນຂໍ້ຕົກລົງສະບັບນີ້, ດຳເນີນການທີ່ເປັນທາງເລືອກອື່ນໆຕາມທີ່ເຫັນວ່າເໝາະສົມ. ລູກຄ້າຮັບເອົາ ແລະ ຮັບປະກັນຕໍ່ທະນາຄານວ່າ ການມອບໝາຍຄຳສັ່ງໃຫ້ທະນາຄານ ບໍ່ວ່າຈະເປັນການແປງສະກຸນເງິນ ແລະ ການໂອນເງິນຈະບໍ່ຂັດຕໍ່ ບັນດາ ກົດໝາຍທີ່ກ່ຽວຂ້ອງ.

**2.2** **ອັດຕາແລກປ່ຽນ**. ບັນດາອັດຕາແລກປ່ຽນລະຫວ່າງເງິນກີບ (LAK) ແລະ ສະກຸນເງິນຕ່າງປະເທດ ທີ່ທະນາຄານແລກປ່ຽນຈາກເງິນສົດໃຫ້ລູກຄ້າເພື່ອນຳໃຊ້ເຂົ້າໃນການດຳເນີນການເຄື່ອນໄຫວບັນຊີ ຫຼື ເງື່ອນໄຂການໃຫ້ບໍລິການ ແມ່ນຢູ່ພາຍໃຕ້ ອັດຕາແລກປ່ຽນທີ່ໄດ້ຮັບອະນຸຍາດຕາມກົດໝາຍທີ່ກ່ຽວຂ້ອງ.

**2.3** **ການຫັກລ້າງໜີ້**. ລູກຄ້າຮັບຮູ້ວ່າທະນາຄານມີສິດຫັກລ້າງໜີ້ທີ່ທະນາຄານຕິດລູກຄ້າ ໂດຍນຳໃຊ້ໜີ້ທີ່ລູກຄ້າຕິດທະນາຄານ. ທະນາຄານອາດຈະ, ໃນທຸກໄລຍະເວລາ, ຖ້າຫາກບໍ່ຂັດຕໍ່ລະບຽບກົດໝາຍ, ແລະ ໂດຍບໍ່ຕ້ອງແຈ້ງໃຫ້ລູກຄ້າຮັບຮູ້, ຫັກລ້າງໜີ້ທີ່ທະນາຄານຕິດລູກຄ້າໂດຍນຳໃຊ້ໜີ້ທີ່ລູກຄ້າຕິດທະນາຄານ.

**2.4** **ການເປີດເຜີຍຂໍ້ມູນ**. ລູກຄ້າອາດຈະແຈ້ງໃຫ້ທະນາຄານຮັບຊາບເປັນລາຍລັກອັກສອນ, ຢ່າງໜ້ອຍບໍ່ຕໍ່າກວ່າ 35 ວັນປະຕິທິນ ຖ້າຫາກວ່າລູກຄ້າຍົກເລີກການອະນຸມັດການເປີດເຜີຍຂໍ້ມູນໃຫ້ ກ) ຜູ້ກ່ຽວຂ້ອງກັບລູກຄ້າ, ຂ) ຜູ້ໄດ້ຮັບການແຕ່ງຕັ້ງຢ່າງແທ້ຈິງ ຫຼື ຮ້ອງຂໍແຕ່ງຕັ້ງໂດຍທະນາຄານ, ຫຼື ຜູ້ມີສ່ວນຮ່ວມຫຼັກ ຫຼື ຍ່ອຍ ຫຼື ຜູ້ຮັບໂອນ, ຄ) ຫ້ອງການ, ສາຂາ, ຜູ້ກ່ຽວຂ້ອງ, ບໍລິສັດລູກ, ພະນັກງານ ຫຼື ນາຍໜ້າ, ງ) ຜູ້ກວດສອບ ຫຼື ທີ່ປຶກສາມືອາຊີບຂອງທະນາຄານ ຫຼື ສະມາຊິກກຸ່ມທະນາຄານ, ຈ) ບຸກຄົນທີສາມ ຫຼື ຜູ້ສະໜອງລະບົບບຸກຄົນທີສາມໃຫ້ທະນາຄານ ຫຼື ສະມາຊິກຂອງກຸ່ມທະນາຄານ, ຜູ້ສະໜອງລະບົບບຸກຄົນທີສາມຜູ້ທີ່ທ່ານສະເໜີຜ່ານທະນາຄານ. ໃນການຂໍຍົກເລີກການອະນຸມັດການເປີດເຜີຍຂໍ້ມູນດັ່ງກ່າວ, ທະນາຄານຂໍສະຫງວນສິດໃນການຍົກເລີກບັນຊີ ຫຼື ການບໍລິການ ອີງຕາມເງື່ອນໄຂ.

**2.5** **ຂໍ້ມູນ ຂອງລູກຄ້າ**. ລູກຄ້າ ຮັບຮູ້ວ່າໃນການເປີດບັນຊີ ແລະ ໄດ້ຮັບການບໍລິການຈາກທະນາຄານ, ທະນາຄານ ແມ່ນໄດ້ເກັບກຳ, ຖື, ຄອບຄອງ, ຄຸ້ມຄອງ ແລະ ໂອນ ເປັນແຕ່ລະໄລຍະ (ໂດຍຂຶ້ນຢູ່ກັບ ຂໍ້ 9 ຂອງ ເງື່ອນໄຂການທະນາຄານທົ່ວໄປຂອງ ANZ) ຂໍ້ມູນສ່ວນຕົວຂອງລູກຄ້າ ໃນຮູບແບບເອເລັກໂຕຣນິກ ແລະ ໃນຮູບແບບທີ່ບໍ່ແມ່ນເອເລັກໂຕຣນິກ. ລູກຄ້າ ຕົກລົງເຫັນດີໂດຍສະເພາະ ຕໍ່ກັບການເກັບກຳ, ການຄອບຄອງ, ການຄຸ້ມຄອງ ແລະ ການໂອນຂໍ້ມູນສ່ວນບຸກຄົນໂດຍສອດຄ່ອງກັບ (i) ຂໍ້ 1.6 ແລະ ຂໍ້ 9 ຂອງເງື່ອນໄຂການທະນາຄານທົ່ວໄປຂອງ ANZ; ແລະ (ii) ກົດໝາຍວ່າດ້ວຍການປົກປ້ອງຂໍ້ມູນເອເລັກໂຕຣນິກ (ສະບັບເລກທີ 25/ສພຊ, ວັນທີ 12 ພຶດສະພາ 2017).

**2.6** **ຂອບເຂດ ແລະ ຂົງເຂດຂອງກົດໝາຍທີ່ນຳໃຊ້**. ໃນກໍລະນີທີ່ຂົງເຂດທີ່ຖືກຄຸ້ມຄອງແມ່ນ ສປປ ລາວ, ທະນາຄານ ແລະ ລູກຄ້າແມ່ນຕ້ອງໄດ້ອີງຕາມການຕັດສິນໂດຍສຳນັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດພາຍໃຕ້ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

## 3. ຕາຕະລາງການບໍລິການສະພາບຄ່ອງ

ຕາຕະລາງການບໍລິການສະພາບຄ່ອງແມ່ນຍັງບໍ່ມີການບໍລິການໃນ ສປປ ລາວ.

## 4. ການຮັບຮອງເພີ່ມຕື່ມ

ເນື່ອງຈາກເງື່ອນໄຂຂອງ ANZ ກ່ຽວກັບການສະໜອງບັນຊີ ແລະ ການໃຫ້ການບໍລິການ, ລູກຄ້າເຫັນດີທີ່ຈະປະຕິບັດທຸກເງື່ອນໄຂ, ດຳເນີນການທຸກເອກະສານ ແລະ ສຳເລັດພິທີການຕ່າງໆທີ່ຈຳເປັນ ເພື່ອເຮັດໃຫ້ທະນາຄານສາມາດ ສະໜອງບັນຊີ ແລະ ໃຫ້ບໍລິການເພື່ອສອດຄ່ອງກັບກົດໝາຍ ແລະ ແນວທາງປະຕິບັດຂອງ ສປປ ລາວ.